

ເຈົ້າມະຫາອຸປະຮາດ ບຸນຄົງ ພະບິດາຂອງເຈົ້າເພັດຊະຣາດ
( 1857 - 1921 )

**ຕອນທີ່໘: ຫວັງຫລວງແລະວັງຫນ້າ**

ຮູ້ສຶກວ່າ
ບັນຫາເລື້ອງຄວາມຂັດແຍ້ງລະຫວ່າງຫວັງຫລວງ
ກັບວັງຫນ້າໄດ້ຮັບຄວາມສົນໃຈເປັນພິເສດ
ໃນການຂຽນປວັດສາດລາວໃນຊ່ວງທ້າຍສັຕວັດທີ
໑໙ເຖີງກາງສັຕວັດທີ໘໐
ເພື່ອຄວາມເຂົ້າໃຈແກ່ບັນຫານີ້
ຂ້າພະເຈົ້າຈຶ່ງຂໍເອົາມາເລົ່າສູ່ທຸກໆທ່ານຟັງ
ເນື່ອງໃນໂອກາດນີ້ດ້ວຍ

ແຕ່ກ່ອນກີ້
ການປົກຄອງຂອງເມືອງລາວເຮົາມີແຕ່ຫວັງຫລວງ
ຫລືຜູ້ປົກຄອງແຜ່ນດິນຊຶ່ງກໍຄືເຈົ້າຊີວິດນັ້ນເອງ
ຕໍ່ມາເມື່ອເມືອງລາວນໍາແບບການປົກຄອງ
ຂອງສຍາມໂດຍສະເພາະແມ່ນຫລັງຈາກ
ທີ່ສຍາມເຂົ້າມາອິດທິພົນໃນບ້ານເມືອງເຮົາຫລັງຈາກປີ໑໗໗໙ ກໍເກີດມີຫວັງຫລວງແລະວັງຫນ້າຂຶ້ນ
ວັງຫນ້າກໍຄືຕໍາແຫນ່ງອຸປຮາດຊຶ່ງກໍຄືເຈົ້າຊີວິດຜູ້ທີສອງນັ້ນເອງ
ໃນຊື່ຂອງມັນເອງກໍບົ່ງບອກແລ້ວວ່າຖ້າເກີດມີຫຍັງເກີດຂຶ້ນກັບເຈົ້າຊີວິດ
ເຈົ້າຊີວິດຜູ້ທີສອງກໍຈະຂຶ້ນແທນ ບັນຫາມັນມີຢູ່ວ່າ
ການຕັ້ງຕໍາແຫນ່ງອຸປຮາດນັ້ນແມ່ນສຍາມເປັນຜູ້ຕັ້ງໃຫ້ ດັ່ງນັ້ນເຂົາຈຶ່ງຕັ້ງຜູ້ໃດກໍຕາມທີ່ເຂົາເຫັນວ່າ
ຈະຫ່ວງດຶງອໍານາດຂອງເຈົ້າຊີວິດ ແລະທີ່ສໍາຄັນທີ່ສຸດຕໍາແຫນ່ງອຸປຮາດນີ້
ແມ່ນສຍາມບໍ່ຕັ້ງລູກເຈົ້າຊີວິດຜູ້ທີຈະສືບຕໍ່ບັນລັງດັ່ງທີ່ເຄີຍປະຕິບັດມາ
ໃນການປົກຄອງຂອງສຍາມເອງ ໃນປວັດຂອງສຍາມ
ມີບາງຄັ້ງສຍາມກໍຕັ້ງນ້ອງເຈົ້າຊີວິດເປັນມະຫາອຸປຮາດດັ່ງສໄມຂອງຣາມາທີ໑
ແຕ່ເຖີງຢ່າງໃດຄືນຜູ້ທີ່ຖືກແຕ່ງຕັ້ງກໍຍັງຢູ່ຖັນແຖວທີ່ໄວ້ເນື້ອເຊື່ອໃຈຂອງເຈົ້າຊີວິດຢູ່ດີ



King Zacharine and his Viceroy, Boun Khong, as featured on a French postcard at the turn of the twentieth century.

*ກໍຣະນີລາວເຮົານັ້ນ*
*ອາດຈະເປັນເຈຕນາຂອງສຍາມ*
*ທີ່ຢາກສ້າງຄວາມແຕກແຍກພາຍໃນ*
*ຕຳແໜ່ງມະຫາອຸປຣາດນີ້*
*ຈຶ່ງນຳຜົນຮ້າຍຫລາຍກ່ວາຜົນດີ*
*ມາສູ່ການປົກຄອງຂອງລາວເຮົາ*
*ແລະເມື່ອເຂົ້າມາປົກຄອງເມືອງລາວໃນປີ໑໘໙໓*
*ເປັນຕົ້ນມາ*
ຝຣັ່ງກໍຍັງຮັກສາການປົກຄອງແບບເກົ່ານັ້ນໄວ້ຄືເກົ່າ
ຊຶ່ງທຳອິດກໍບໍ່ຄ່ອຍມີບັນຫາຫຍັງ
ຈະມີແດ່ກໍຕໍ່ເມື່ອເຈົ້າສັກກະຣິນເສັງຊີວິດລົງ
ຝຣັ່ງກໍຕັ້ງເຈົ້າສີສວ່າງວົງ
ຜູ້ຊຶ່ງເປັນອົງມົງກຸດຣາຊກຸມມານຂຶ້ນແທນ
ໂດຍການສືກໜ້າມະຫາອຸປຣາດບຸນຄົງ
ທີ່ຍັງຄົງມີຊີວິດຢູ່ ຈະດ້ວຍເຫດນີ້ເປັນເຄົ້າ
ຜູ້ທີ່ຂຽນປວັດສາດລາວຕໍ່ແຕ່ນັ້ນມາຈຶ່ງມັກກ່າວອ້າງຄວາມຂັດແຍ້ງຂອງຫວັງຫລວງແລະວັງໜ້າມ
າຈົນທົ່ວເຖິງທຸກວັນນີ້

ເພື່ອລົງເລິກເຖິງບັນຫາເລື້ອງນີ້ ເຮົາມາພາກັນໃຈ້ແຍກເບິ່ງວ່າ
ສາຍຂອງຫວັງຫລວງແລະວັງໜ້າມີຄວາມຂັດແຍ້ງກັນແທ້ບໍ່? ຖ້າມີແທ້ ມັນມີຫລາຍປານໃດ?
ແລະຜົນຂອງຄວາມຂັດແຍ້ງນີ້ ກໍ່ໃຫ້ເກີດຫຍັງແດ່ສຳລັບທັງສອງຝ່າຍ?

ຕາມການໃຈ້ແຍກຂອງຂ້າພະເຈົ້າ ເລື້ອງຄວາມຂັດແຍ້ງນັ້ນມີຈິງແທ້
ແຕ່ມັນຊິໜັກໜລືຫລາຍປານໃດ ນັ້ນເປັນອີກເລື້ອງນຶ່ງ
*ທາງຝ່າຍຫວັງຫລວງຊຶ່ງເປັນຝ່າຍໄດ້ປຽບເພາະເປັນຝ່າຍຄອງແຜ່ນດິນນັ້ນ*
*ກໍຄິດວ່າຕົນນັ້ນເປັນຜູ້ມີສິດໂດຍຖານະຫລືໂດຍຖືກຕ້ອງຕາມທັມນອງຄອງທັມໂດຍແທ້ຈິງ*
*ສ່ວນຝ່າຍວັງໜ້າຊຶ່ງເປັນຝ່າຍເສັຽປຽບກໍຄິດໃນທາງກົງກັນຂ້າມ*
*ທຳນອງວ່າຕົນຄວນມີທາງເປັນພະເຈົ້າແຜ່ນດິນຢູ່ຄືກັນ ເພາະຕົນເປັນເຈົ້າຊີວິດຜູ້ທີສອງ*
*ເຫດທີ່ບໍ່ໄດ້ເປັນກໍເພາະການຫລິ້ນພັກຫລິ້ນພວກ ຫລືພາຍນອກເຂົ້າມາແຊກແຊງ*

*ດັ່ງຝຣັ່ງເສດເປັນຕົ້ນ ດ້ວຍວ່າຝ່າຍວັງຫນ້າຢູ່ໃນທ່າທີ່ເສັ່ງປຽບ*
*ດັ່ງນັ້ນມັນຈຶ່ງບໍ່ແປກທີ່ຈະເຫັນຝ່າຍນີ້ ຕັ້ງຫນ້າຢາກພິສູດໃຫ້ໂລກເຫັນວ່າ*
*ຕົນນັ້ນມີດີບໍ່ນ້ອຍຫນ້າກ່ວາຫລືຖ້າເວົ້າຢ່າງບໍ່ເກງໃຈກໍອາດຈະເປັນວ່າ*
*ຕົນນັ້ນດີກ່ວາຜູ້ທີ່ຖືກເອີ້ນວ່າເຈົ້າຊີວິດເປັນຕັ້ງຫລາຍເທົ່າອີກດ້ວຍ*
*ຊຶ່ງຕົວຈິງກໍຂ່ອນຂ້າງຈະພິສູດວ່າ ເຊື້ອສາຍຂອງເຈົ້າບຸນຄົງຝ່າຍວັງຫນ້ານັ້ນ*
*ລ້ວນແລ້ວແຕ່ມີບົດບາດໃນດ້ານການເມືອງການປົກຄອງລາວ ນັບຕັ້ງແຕ່ເຈົ້າເພັຊຣາດ*
*ເຈົ້າສຸວັນນະພູມມາ ຈົນເຖິງເຈົ້າສຸພານຸວົງຜູ້ເປັນນ້ອງຫລ້າ*
*ສ່ວນທາງຝ່າຍເຈົ້າແຜ່ນດິນສີສວ່າງວົງ ຮູ້ສຶກວ່າຈະເປັນຝ່າຍອະນຸຣັກນິຍົມ*
*ເຊື້ອສາຍຂອງເພິ່ນນັ້ນຂ່ອນຂ້າງຢູ່ໃນທ່າຮັບ ເຊິ່ງກໍຄືເປັນເຫດໃຫ້ໄປບໍ່ທັນສະພາບການຈັກເທື່ອ*
*ດັ່ງທີ່ປາກົດໃນພາກການປະຕິບັດຕົວຈິງຂອງເຈົ້າມະຫາຊີວິດສີສວ່າງວັທນາ*
*ແລະອົງມົງກຸດຣາຊກຸມມານເຈົ້າຟ້າຊາຍວົງສວ່າງນັ້ນເອງ*

ຂ້າພະເຈົ້າຄິດວ່າ ເລື້ອງຄວາມຂັດແຍ້ງນີ້ມີທາງຈະຫລີກລ້ຽງໄດ້
ຫາກຕ່າງຝ່າຍຕ່າງຫຍັບເຂົ້າຫາກັນແດ່ຈັກຫນ້ອຍນຶ່ງ ເລື້ອງຈະເປັນຢ່າງໃດນັ້ນໃນພາກຕົວຈິງນັ້ນ
ຂໍເຊີນທ່ານຕິດຕາມຕໍ່ໄປໃນຕອນຫນ້າ

## ແຜນຜັງສະແດງວົງຕະກູນເຈົ້າເພັດຊະຣາດ ແລະ ເຫດການສຳຄັນ

